ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 5905 /ກປ

ນະຄອນຫຼວງວຽງຈັນ, ວັນທີ 26 NOV 2024

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ແລະ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 5780/ກລປ, ລົງວັນທີ 20 ກັນຍາ 2024;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 2101/ກຈພ, ລົງວັນທີ 06 ພະຈິກ 2024.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ແນໃສ່ຈັດຕັ້ງປະຕິບັດ ແລະ ພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມລ້ຽງສັດ ແລະ ການປະມົງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກລປ"** ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງກະຊວງກະສິກຳ ແລະ ປ່າໄມ້, ມີພາລະບົດບາດເປັນເສນາທິການໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ໃນການຄຸ້ມຄອງ, ພັດທະນາ ແລະ ບໍລິການດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ໃຫ້ມີການຂະຫຍາຍຕົວ ເພື່ອຮັບປະກັນຄວາມໝັ້ນຄົງໃນການສະໜອງທາດຊີ້ນ, ມີໂພຊະນາການ, ປອດໄພ ແລະ ເປັນສິນຄ້າ ຕາມທິດມີຈຸດສຸມ, ມີຄຸນນະພາບ, ສະອາດ, ສີຂຽວ ແລະ ຍືນຍົງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ກົມລ້ຽງສັດ ແລະ ການປະມົງ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ; ສຸມໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດ ໂດຍສະເພາະ ສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກ ເພື່ອສ້າງຖານລາຍຮັບທີ່ແຂງແຮງ ດ້ວຍການຫັນເປັນແຜນງານ, ໂຄງການ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ; ສ້າງ, ປັບປຸງ, ໂຄສະນາເຜີຍແຜ່ ແລະ ກວດກາປະເມີນຜົນການຈັດຕັ້ງປະຕິບັດບັນດາກົດໝາຍ, ນິຕິກຳລຸ່ມກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານລ້ຽງສັດ ແລະ ການປະມົງ;
3. ສ້າງຮ່າງຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຮັບຮອງ; ສ້າງແຜນງານ, ແຜນການ ແລະ ໂຄງການລ້ຽງສັດ ແລະ ສັດນ້ຳ ເປັນສິນຄ້າ, ໂຄງການປຸງແຕ່ງຜະລິດຕະພັນສັດ ເພື່ອຮັບໃຊ້ພາຍໃນທົດແທນການນຳເຂົ້າ ແລະ ສົ່ງອອກ ເປັນຕົ້ນແມ່ນ ສັດ-ຜະລິດຕະພັນສັດ ທີ່ມີທ່າແຮງ, ມີສັນຍາກັບປະເທດຄູ່ຄ້າແລ້ວ ເພື່ອນຳສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
4. ສຸມທຸກກຳລັງແຮງຊຸກຍູ້, ສົ່ງເສີມ ການຜະລິດທາດຊີ້ນໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ, ມີຜົນຜະລິດສົດ, ສະອາດ ແລະ ປອດໄພ ຊົມໃຊ້ພາຍໃນ, ທົດແທນການນຳເຂົ້າ;
5. ຍູ້ແຮງການລ້ຽງສັດ ແລະ ການປະມົງ ເປັນສິນຄ້າ ແບບເປັນຟາມ ເປັນການຜະລິດທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງ ຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງທີ່ໄດ້ປຽບ ຂອງທ້ອງຖິ່ນ, ຊຸກຍູ້ການພັດທະນາ ວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບສະອາດ, ຜະລິດສິນຄ້າທີ່ເປັນທ່າແຮງໄດ້ປຽບ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມ ຂອງປະເທດຄູ່ຄ້າ;
6. ຄົ້ນຄວ້າ, ກຳນົດ ມາດຕະຖານການລ້ຽງສັດທີ່ດີ (GAHP), ມາດຕະຖານການລ້ຽງສັດນ້ຳທີ່ດີ (GAqP) ແລະ ພັດທະນາວຽກງານການກວດກາ, ຢັ້ງຢືນ, ຂຶ້ນທະບຽນ, ຮັບຮອງ ມາດຕະຖານຟາມລ້ຽງສັດ-ສັດນ້ຳ ໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ໂຮງປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ ແລະ ສະຖານທີ່ເກັບຮັກສາຜະລິດຕະພັນສັດ ແລະ ສັດນ້ຳ, ໂຮງງານຢາສັດຕະວະແພດ, ການຂົນສົ່ງ ແລະ ຕະຫຼາດສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ, ກົນຈັກ ແລະ ເຄື່ອງມືອຸປະກອນ ຮັບໃຊ້ການລ້ຽງສັດ ແລະ ການປະມົງ;
7. ຄົ້ນຄວ້າ, ສ້າງ ແລະ ປັບປຸງພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈ, ທົດລອງຢັ້ງຢືນມາດຕະຖານສິນຄ້າກະສິກຳ, ປັດໄຈການຜະລິດ ຮັບໃຊ້ພາຍໃນ, ການນຳເຂົ້າ ແລະ ສຳລັບສົ່ງອອກ;
8. ຄົ້ນຄວ້າ ກຳນົດລາຍການ ແລະ ບັນດາມາດຕະການສົ່ງເສີມການລ້ຽງສັດ-ສັດນ້ຳ ຮັບໃຊ້ພາຍໃນທົດແທນການນຳເຂົ້າ ເພື່ອປົກປ້ອງຜູ້ຜະລິດພາຍໃນ ພ້ອມທັງວາງແຜນດຸ່ນດ່ຽງການຜະລິດພາຍໃນ ແລະ ການນຳເຂົ້າສິນຄ້າ ກ່ຽວກັບສັດ, ຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ; ຄົ້ນຄວ້າ, ສັງລວມມາດຕະຖານເງື່ອນ

ໄຂດ້ານເຕັກນິກ ແລະ ຄຸນນະພາບ ສິນຄ້າທີ່ມີສັນຍາ (SPS) ແລ້ວ; ສຶກສາ ແລະ ຄົ້ນຄວ້າ ວິທີການ, ຂັ້ນຕອນ, ມາດຕະຖານ, ລະບຽບການ, ວິເຄາະວິໄຈຕະຫຼາດ ຂອງບັນດາປະເທດທີ່ມີຄວາມຕ້ອງການສິນຄ້າກະສິກຳ ຂອງ ສປປ ລາວ ເພື່ອກຳນົດຊະນິດສິນຄ້າ, ປະເພດສັດ ແລະ ສັດນ້ຳ ບຸລິມະສິດສົ່ງອອກ ຂອງປະເທດເຮົາ ທີ່ມີທ່າແຮງ, ມີສັນຍາຊື້ຂາຍແລ້ວ; ປະສານ ແລະ ເຈລະຈາເຕັກນິກເປີດຕະຫຼາດ ຢ່າງເປັນທາງການສຳລັບສົ່ງອອກສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ກັບປະເທດຄູ່ຄ້າ ຕາມມາດຕະຖານສາກົນ ທີ່ ສປປ ລາວ ເປັນພາຄີ;

9. ຄຸ້ມຄອງ, ກວດກາ, ຢັ້ງຢືນ ມາດຕະຖານການລ້ຽງສັດທີ່ດີ (GAHP), ມາດຕະຖານການລ້ຽງສັດນ້ຳທີ່ດີ (GAqP), ສຸຂານາໄມໃນການ ນຳເຂົ້າ, ສົ່ງອອກຜະລິດຕະພັນສັດ ແລະ ສັດນ້ຳ, ຄຸ້ມຄອງການນຳເຂົ້າປັດໄຈການຜະລິດເປັນຕົ້ນ ຢາປົວພະຍາດສັດ, ຢາວັກຊີນ, ສານກະຕຸ້ນ, ອຸປະກອນການສັດຕະວະແພດ, ອາຫານສັດ, ແນວພັນສັດ-ສັດນ້ຳ, ແນວພັນປາ, ກົນຈັກ ແລະ ເຄື່ອງມືອຸປະກອນ ຮັບໃຊ້ການລ້ຽງສັດ ແລະ ການປະມົງ; ເອື້ອອຳນວຍຄວາມສະດວກ ໃນການສົ່ງຜ່ານສິນຄ້າກະສິກຳ ແລະ ປ່າໄມ້ ຈາກປະເທດຕົ້ນທາງຫາປະເທດປາຍທາງ ຕາມກົດໝາຍ ແລະ ລະບຽບການ;
10. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານກັກກັນສັດ, ການຄວບຄຸມການເຄື່ອນຍ້າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ, ຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບການສັດຕະວະແພດ ໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລວມທັງການຢັ້ງຢືນດ້ານສຸຂະພາບສັດ ແລະ ສຸຂານາໄມ;
11. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ໂຮງປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ, ສະຖານທີ່ເກັບຮັກສາຜະລິດຕະພັນສັດ ແລະ ສັດນ້ຳ, ໂຮງງານຢາສັດຕະວະແພດ, ການຂົນສົ່ງ ແລະ ຕະຫຼາດສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ, ຄຸ້ມຄອງ ກວດກາ ມາດຕະຖານການປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພໃນການປຸງແຕ່ງ, ການຫຸ້ມຫໍ່ ແລະ ອື່ນໆ ຢູ່ໃນໂຮງປຸງແຕ່ງ;
12. ຄົ້ນຄວ້າ ປັບປຸງບັນດາ ນິຕິກຳ, ກົນໄກ, ລະບຽບການ, ຂັ້ນຂອດ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກໃຫ້ແກ່ການດຶງດູດການລົງທຶນ, ເຄື່ອນໄຫວດຳເນີນທຸລະກິດ, ການຜະລິດ ຂອງບັນດາ ບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ຄອບຄົວຕົວແບບ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ; ຄົ້ນຄວ້າ ແລະ ປະກອບຄຳເຫັນ, ໃຫ້ການປຶກສາ, ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນພາຍໃນ ແລະ ຕ່າງປະເທດ ລວມທັງການສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ;
13. ພັດທະນາ, ວິເຄາະ-ວິໄຈ, ສ້າງຖານຂໍ້ມູນສະຖິຕິ ສັດ, ສັດນ້ຳ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບທີ່ດິນລ້ຽງສັດ ແລະ ແຫຼ່ງທີ່ຢູ່ອາໄສ ຂອງສັດນ້ຳ, ຂໍ້ມູນການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ປະຈຳເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ ແລະ 01 ປີ ຢ່າງເປັນລະບົບ ໂດຍການນຳໃຊ້ລະບົບເຕັກໂນໂລຊີ ທີ່ທັນສະໄໝ ໃຫ້ສາມາດເຊື່ອມໂຍງພາຍໃນ ແລະ ສາກົນ;
14. ຊຸກຍູ້, ສະໜັບສະໜູນ ການພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ ແນວພັນສັດ ແລະ ສັດນ້ຳ, ການຜະລິດອາຫານສັດ ແລະ ການພັດທະນາ ກ່ຽວກັບທົ່ງຫຍ້າລ້ຽງສັດ;
15. ພັດທະນາການຜະລິດ, ສະໜອງ ແລະ ຂະຫຍາຍຕາໜ່າງການນຳໃຊ້ຢາສັດຕະວະແພດ ພ້ອມທັງສະໜອງອຸປະກອນການສັດຕະວະແພດ; ພັດທະນາລະບົບການສືບຍ້ອນຫຼັງປະຫວັດ ຂອງສັດ, ສັດນ້ຳ, ຜະລິດຕະພັນສັດ ແລະ ສັດນ້ຳ, ດຳເນີນການຂຶ້ນທະບຽນພິມສັດ;
16. ຄົ້ນຄວ້າ, ຂຶ້ນ ແລະ ແຈ້ງທະບຽນອາຫານສັດ, ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ, ວັດຖຸດິບ ສຳລັບຜະລິດອາຫານສັດ, ສານເຄມີ ສຳລັບຜະລິດຢາສັດຕະວະແພດ, ເຊື້ອພັນພະຍາດສັດ ລວມທັງ

ແນວພັນ, ນ້ຳເຊື້ອ, ໂຕອ່ອນ ຂອງ ສັດ ແລະ ສັດນ້ຳ;

17. ຄົ້ນຄວ້າ, ພິຈາລະນາສະເໜີ ຈົດລິຂະສິດ, ຂຶ້ນທະບຽນ, ແນວພັນສັດ ແລະ ສັດນ້ຳ, ສູດອາຫານສັດ, ພືດອາຫານສັດ, ພືດນ້ຳ, ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ ແລະ ອຸປະກອນລ້ຽງສັດ ແລະ ສັດນ້ຳ;

18. ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດລະບົບ ເຝົ້າລະວັງ, ກັນ ແລະ ຄວບຄຸມພະຍາດສັດ ແລະ ສັດນ້ຳ, ລວມທັງການພັດທະນາລະບົບຄວາມປອດໄພທາງດ້ານຊີວະພາບ ຂອງການລ້ຽງສັດ ແລະ ສັດນ້ຳ;

19. ປັບປຸງລະບົບການວິໄຈບົ່ງມະຕິພະຍາດສັດ ແລະ ສັດນ້ຳ, ວິໄຈຄຸນນະພາບ-ຄວາມປອດໄພ ຂອງອາຫານສັດ, ພືດອາຫານສັດ, ແຫຼ່ງວັດຖຸດິບອາຫານສັດ, ຢາສັດຕະວະແພດ, ຄຸນນະພາບນ້ຳ ສຳລັບການລ້ຽງສັດ ແລະ ສັດນ້ຳ, ແລະ ຜະລິດຕະພັນສັດ ແລະ ສັດນ້ຳ ລວມທັງການຕິດຕາມ ແລະ ຈຳກັດ ເຊື້ອທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ;

20. ສ້າງ ແລະ ປັບປຸງຕາໜ່າງ, ຫຼັກສູດສັດຕະວະແພດ ແລະ ສ້າງສັດຕະວະແພດບ້ານ; ຊຸກຍູ້ສົ່ງເສີມການບໍລິການດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ວິຊາຊີບສັດຕະວະແພດ, ສັດຕະວະແພດບ້ານ ແລະ ສົ່ງເສີມວຽກງານສະຫວັດດີການສັດ;

21. ກຳນົດບັນຊີລາຍຊື່ພະຍາດລະບາດ ຂອງສັດ ແລະ ສັດນ້ຳ, ຊະນິດສັດ ແລະ ສັດນ້ຳ, ລາຍການສານຊີວະພັນ-ເຄມີພັນ, ຢາສັດຕະວະແພດທີ່ມີຄວາມສ່ຽງ ເພື່ອຄວບຄຸມການແຜ່ລະບາດ ຂອງພະຍາດ, ປ້ອງກັນຊີວິດ, ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ;

22. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກລ້ຽງສັດ ແລະ ການປະມົງ ໃຫ້ໄປຕາມວຽກຈຸດສຸມ ຂອງກະຊວງ, ວຽກຈຸດສຸມຂອງລັດຖະບານໃນແຕ່ລະໄລຍະ ບົນພື້ນຖານຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດ;

23. ພັດທະນາດ່ານ ແລະ ກຳນົດດ່ານກວດກາສັດຕະວະແພດ ເພື່ອກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ, ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ປະມົງ ພ້ອມທັງກຳນົດຈຸດກວດກາ ຂອງເຂດປອດພະຍາດສັດ ແລະ ສັດນ້ຳ, ຈຸດກວດກາຊົ່ວຄາວພາຍໃນປະເທດ ໃນກໍລະນີເກີດພະຍາດລະບາດ; ຄົ້ນຄວ້າ ແລະ ສະເໜີຕໍ່ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການປະກາດ ແລະ ຍົກເລີກເຂດລະບາດພະຍາດສັດ ແລະ ພະຍາດສັດນ້ຳ;

24. ຄຸ້ມຄອງ, ຕິດຕາມ, ກວດກາດ້ານວິຊາການ, ບັນດາທຸລະກິດ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ, ການຂ້າ ແລະ ປຸງແຕ່ງຜະລິດຕະພັນ ສັດ ແລະ ສັດນ້ຳ, ການກວດກາອະນາໄມຊີ້ນ, ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນສັດ ແລະ ສັດນ້ຳ, ອາຫານສັດ, ຢາສັດຕະວະແພດ;

25. ຊຸກຍູ້ການຈັດຕັ້ງສະພາສັດຕະວະແພດ, ສະມາຄົມ, ການສ້າງຕັ້ງກຸ່ມ, ສະຫະກອນ ກ່ຽວກັບວິຊາຊີບລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ລວມທັງການສ້າງກອງທຶນພັດທະນາດ້ານການລ້ຽງສັດ, ສັດນ້ຳ ແລະ ການຮັກສາສຸຂະພາບສັດ ແລະ ສັດນ້ຳ;

26. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດວຽກງານໃນຂົງເຂດການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ;

27. ພົວພັນ, ຮ່ວມມື ແລະ ປະສານງານ ກັບຂະແໜງການອື່ນ ຢູ່ພາຍໃນ ແລະ ອົງການຈັດຕັ້ງສາກົນ, ສະຖາບັນການເງິນ, ບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນຂ່າວສານ, ສົ່ງເສີມການລົງທຶນ, ການຊ່ວຍເຫຼືອດ້ານວິຊາການ ເພື່ອພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃຫ້ເຂັ້ມແຂງ;

28. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລກະສິກຳ, ປ່າໄມ້ ແລະ ຊີນລະປະທານ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ພ້ອມທັງຊຸກຍູ້, ຫັນກິດຈະກຳ ໂຄງການ, ງົບປະມານ, ສະໜອງດ້ານເຕັກນິກວິຊາການດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອປະກອບສ່ວນໃຫ້ບັນດາ ສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;
29. ສະຫຼຸບ, ລາຍງານ ວຽກງານຂອງກົມ ໃຫ້ລັດຖະມົນຕີ ຊາບ ແລະ ເພື່ອຊີ້ນຳ ເປັນແຕ່ລະໄລຍະ;
30. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ກົມລ້ຽງສັດ ແລະ ການປະມົງ ມີສິດ ດັ່ງນີ້:

1. ນຳສະເໜີ ຮ່າງຍຸດທະສາດ, ແຜນງານ, ແຜນການ, ໂຄງການ ຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງກົມ ແລະ ຂະແໜງການ; ຄົ້ນຄວ້າກຳນົດນະໂຍບາຍ, ມາດຕະການໃນການສົ່ງເສີມການຜະລິດພາຍໃນ ແລະ ສົ່ງອອກ; ນຳສະເໜີມາດຕະຖານລວມ ດ້ານເຕັກນິກ ແລະ ຄຸນນະພາບ ດ້ານການລ້ຽງສັດ, ການສັດຕະວະແພດ, ການປະມົງ ແລະ ການປຸງແຕ່ງ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ;
2. ອອກຂໍ້ຕົກລົງ, ອອກແຈ້ງການ, ຄຳແນະນຳ, ຄູ່ມືວິຊາການ, ໜັງສືສະເໜີເຖິງ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງ ຂອງກົມຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຮັບຜົນສຳເລັດ ຕາມຄາດໝາຍທີ່ວາງໄວ້ ພ້ອມທັງກວດກາ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຊີ້ນຳ, ຄຸ້ມຄອງ ດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ຕາມສາຍຕັ້ງໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກ;
4. ຊີ້ນຳ, ຄຸ້ມຄອງ ຕາມສາຍຕັ້ງ ທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ແຕ່ສູນກາງລົງຮອດທ້ອງຖິ່ນ;
5. ຄຸ້ມຄອງ, ນຳໃຊ້ ພະນັກງານ ແລະ ຊັບສິນ ຂອງລັດ ເພື່ອຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ ຕາມຄວາມຮັບຜິດຊອບຂອງກົມ ບົນພື້ນຖານສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;
6. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ມາດຕະການ, ມາດຕະຖານເຕັກນິກ, ຄູ່ມື ແລະ ຂໍ້ມູນຂ່າວສານກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ໃນຂອບເຂດຄວາມຮັບຜິດຊອບຂອງກົມ;
7. ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນມາດຕະຖານການຜະລິດ, ການປຸງແຕ່ງ ແລະ ການບໍລິການ, ການວິໄຈພະຍາດສັດ, ຄຸນນະພາບອາຫານສັດ ແລະ ຢາສັດຕະວະແພດ, ການຢັ້ງຢືນສຸຂະພາບສັດ ແລະ ສຸຂານາໄມ;
8. ອອກ, ໂຈະ ຫຼື ຖອນ ໃບທະບຽນ ແນວພັນສັດ, ຄຣີນິກສັດ, ໃບຢັ້ງຢືນສຸຂານາໄມ, ໃບຢັ້ງຢືນມາດຕະຖານສຸຂະພາບສັດ, ໃບຢັ້ງຢືນເຕັກນິກວິຊາການລົງທຶນດ້ານການລ້ຽງສັດ ຕາມກົດໝາຍ ແລະ ລະບຽບການວາງອອກ;
9. ນຳສະເໜີລັດຖະມົນຕີ ຮັບເອົາການລົງທຶນ, ການອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ດ້ານການລ້ຽງສັດ, ການສັດຕະວະແພດ, ການປະມົງ ແລະ ການປຸງແຕ່ງ, ໃບອະນຸຍາດດຳເນີນທຸລະກິດສຸຂານາໄມ, ສູນກັກກັນສັດ, ໃບອະນຸຍາດນຳເຂົ້າສັດ-ສັດນ້ຳ ແລະ ຜະລິດຕະພັນສັດ-ສັດນ້ຳ;
10. ນຳສະເໜີລັດຖະມົນຕີ ອອກ, ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ຂັ້ນລຸ່ມຂອງກົມ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

11. ອະນຸຍາດໃຫ້ ຫົວໜ່ວຍວິຊາການ ຫຼື ຜູ້ບໍລິການ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ດຳເນີນການບໍລິການ ແລະ ອອກໃບຢັ້ງຢືນດ້ານວິຊາການສະເພາະໃດໜຶ່ງ ແທນອົງການຄຸ້ມຄອງວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ;
12. ສະເໜີປະຕິບັດມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກັບວຽກງານລ້ຽງສັດ ສັດຕະວະແພດ ແລະ ປະມົງ;
13. ສະເໜີປັບປຸງກົງຈັກການຈັດຕັ້ງ ຂອງກົມ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ບັນດາກົງຈັກການຈັດຕັ້ງທີ່ຢູ່ໃນຄວາມຮັບຜິດຊອບ ຂອງກົມ ຕາມການແບ່ງຂັ້ນຄຸ້ມຄອງ, ການກຳນົດຕຳແໜ່ງງານ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
14. ຄົ້ນຄວ້າ, ນຳສະເໜີແຕ່ງຕັ້ງ, ບັນຈຸ-ສັບຊ້ອນ, ຈັດວາງບຸກຄະລາກອນ, ເລື່ອນຊັ້ນ-ຂັ້ນເງິນເດືອນ, ຍ້ອງຍໍ ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດວິໄນຕໍ່ພະນັກງານພາຍໃນກົມ ຕາມລະບຽບການທີ່ໄດ້ກຳນົດໄວ້ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
15. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ໃນຄວາມຮັບຜິດຊອບຂອງກົມ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກຳ ແລະ ກົນຈັກກະສິກຳ, ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ, ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນ ແລະ ການເຈລະຈາ ກ່ຽວກັບວຽກງານລ້ຽງສັດ ແລະ ການປະມົງ ກັບຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;
16. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມລ້ຽງສັດ ແລະ ການປະມົງ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກບໍລິຫານ;
2. ພະແນກແຜນການ ແລະ ການຮ່ວມມື;
3. ພະແນກມາດຕະຖານ ແລະ ສຸຂານາໄມ;
4. ພະແນກລ້ຽງສັດ;
5. ພະແນກສັດຕະວະແພດ;
6. ພະແນກປະມົງ;
7. ສູນວິໄຈພະຍາດສັດ;
8. ສູນຜະລິດຢາສັດຕະວະແພດ;
9. ສູນວິໄຈອາຫານສັດ;
10. ສູນພັດທະນາການປະມົງ.

ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ກົມລ້ຽງສັດ ແລະ ການປະມົງ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ, ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການປະຕິບັດວຽກງານຂອງຕົນ;

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ;

2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງວຽກງານທີ່ຕົນຊີ້ນຳ;

   ຮອງຫົວໜ້າກົມ ຜູ້ຮັກສານການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ;

3. ຫົວໜ້າພະແນກ, ຫົວໜ້າສູນ, ຮອງຫົວໜ້າພະແນກ, ຮອງຫົວໜ້າສູນ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ ແລະ ສູນ

ມາດຕາ 7 ໜ້າທີ່ ຂອງພະແນກບໍລິຫານ

ພະແນກບໍລິຫານ ມີໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະ ການປະມົງ ໃນການຄຸ້ມຄອງ ແລະ ພັດທະນາວຽກງານຈັດຕັ້ງ ແລະ ບຸກຄະລາກອນ; ຕິດຕາມ ແລະ ປະເມີນຜົນພະນັກງານ-ລັດຖະກອນ, ອາສາສະໝັກ ແລະ ຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຄົ້ນຄວ້າ ແລະ ນຳສະເໜີ ການປະຕິບັດນະໂຍບາຍເລື່ອນຊັ້ນ-ຂັ້ນເງິນເດືອນ, ບັນຈຸ-ສັບຊ້ອນ, ເລື່ອນຕຳແໜ່ງ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກົມ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;
2. ຄົ້ນຄວ້າ, ສັງລວມ, ຕິດຕາມ, ກວດກາ ແລະ ຄຸ້ມຄອງ ການເງິນ, ການບັນຊີ, ວັດຖຸ-ຊັບສິນຂອງລັດ, ງົບປະມານ ລົງທຶນຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແລະ ທຶນກູ້ຢືມ ພ້ອມທັງສ້າງ ແລະ ປັບປຸງ ຖານຂໍ້ມູນວັດຖຸ-ຊັບສິນ ຂອງລັດ ທີ່ຂຶ້ນກັບກົມລ້ຽງສັດ ແລະ ການປະມົງ;
3. ຄົ້ນຄວ້າ ແລະ ນຳສະເໜີ ການປັບປຸງພາລະບົດບາດ, ຕຳແໜ່ງງານ, ກຳນົດແຜນກໍ່ສ້າງບຸກຄະລາກອນຂອງພະແນກ, ບັນດາພະແນກ ແລະ ສູນ ທີ່ຂຶ້ນກັບກົມລ້ຽງສັດ ແລະ ການປະມົງ ເພື່ອນຳສະເໜີພາກສ່ວນກ່ຽວຂ້ອງ ພິຈາລະນາ;
4. ພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ຈັດຕັ້ງຜັນຂະຫຍາຍຍຸດທະສາດພັດທະນາຄວາມກ້າວໜ້າ ແມ່ຍິງ ພ້ອມທັງສະຫຼຸບ, ລາຍງານວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງ ແມ່ຍິງ ແລະ ແມ່-ເດັກ ຂອງກົມລ້ຽງສັດ ແລະ ການປະມົງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເປັນແຕ່ລະໄລຍະ;
5. ສັງລວມ, ຈໍລະຈອນ ເອກະສານຂາເຂົ້າ-ຂາອອກ, ກະກຽມບົດບັນທຶກ, ບົດລາຍງານ, ບົດຄວາມ, ບົດໂອ້ລົມ ແລະ ການພົບປະອື່ນ ໂດຍປະສານກັບບັນດາພະແນກ ແລະ ສູນ ໃນການກະກຽມເອກະສານ, ພິທີການຈັດກອງປະຊຸມ ແລະ ການພົບປະ ຂອງການນຳຂັ້ນກົມ;

31. ເປັນເຈົ້າການປະສານສົມທົບກັບບັນດາພະແນກ ແລະ ສູນ ທີ່ຂຶ້ນກັບກົມລ້ຽງສັດ ແລະ ການປະມົງ ເພື່ອປະກອບສ່ວນໃນການພັດທະນາບັນດາວິທະຍາໄລກະສິກຳ, ປ່າໄມ້ ແລະ ຊົນລະປະທານ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ພ້ອມທັງຊຸກຍູ້, ຫັນກິດຈະກຳ ໂຄງການ, ງົບປະມານ, ສະໜອງດ້ານເຕັກນິກວິຊາການດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອປະກອບສ່ວນໃຫ້ບັນດາ ສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;
6. ຕິດຕາມ ແລະ ກວດກາ ການນຳໃຊ້, ການສ້ອມແປງ, ການບຳລຸງຮັກສາ, ການກໍ່ສ້າງ, ການຈັດຊື້ ແລະ ການຊຳລະສະສາງ ພາຫະນະ, ເຄື່ອງໃຊ້ໄຟຟ້າ, ເຄື່ອງກົນຈັກ, ຕຶກອາຄານ ແລະ ວັດຖຸອຸປະກອນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງກົມລ້ຽງສັດ ແລະ ການປະມົງ;
7. ສັງລວມ, ສະຫຼຸບລາຍງານການຈັດຕັ້ງປະຕິບັດ ປະຈຳອາທິດ, ປະຈຳເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ ແລະ ປະຈຳປີ ເພື່ອລາຍງານຕໍ່ ກະຊວງກະສິກຳ ແລະ ປ່າໄມ້;
8. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກແຜນການ ແລະ ການຮ່ວມມື**

ພະແນກແຜນການ ແລະ ການຮ່ວມມື ມີໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະ ການປະມົງ ໃນການຜັນຂະຫຍາຍຍຸດທະສາດ, ແຜນພັດທະນາກະສິກຳ ແລະ ປ່າໄມ້ ໃຫ້ເປັນແຜນການ, ແຜນດຳເນີນງານ ແລະ ໂຄງການພັດທະນາການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ທັງໄລຍະສັ້ນ, ກາງ ແລະ ໄລຍະຍາວ;
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ສ້າງແຜນຄວາມຕ້ອງການງົບປະມານໂຄງການລົງທຶນຂອງລັດ, ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແລະ ກູ້ຢືມຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ, ການຮ່ວມມືສອງຝ່າຍ-ຫຼາຍຝ່າຍ ເພື່ອຍາດແຍ່ງການຊ່ວຍເຫຼືອເຂົ້າໃນການພັດທະນາວຽກງານລ້ຽງສັດ ແລະ ການປະມົງ ໃຫ້ເຂັ້ມແຂງ;
3. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການ, ບັນດາ ໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແລະ ກູ້ຢືມຈາກຕ່າງປະເທດ ທີ່ຂຶ້ນກັບການຄຸ້ມຄອງຂອງກົມລ້ຽງສັດ ແລະ ການປະມົງ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ວາງອອກເປັນແຕ່ລະໄລຍະພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໃຫ້ໄດ້ຜົນສຳເລັດເປັນຢ່າງດີ;
4. ເປັນເຈົ້າການພັດທະນາລະບົບເຕັກໂນໂລຊີຖານຂໍ້ມູນ ກ່ຽວກັບສັດ, ຄຸ້ມຄອງວຽກງານສະຖິຕິດ້ານການລ້ຽງສັດ ແລະ ປະມົງ, ແຜນຊຸກຍູ້, ຕິດຕາມ ສະພາບການຜະລິດສະບຽງອາຫານ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ, ການຕະຫຼາດ, ການສົ່ງອອກສັດ ແລະ ສັດນ້ຳ; ຜະລິດຕະພັນສັດ ແລະ ສັດນ້ຳພ້ອມທັງສ້າງຖານຂໍ້ມູນການຜະລິດ ໃຫ້ສາມາດນຳໃຊ້ໄດ້ຢ່າງມີປະສິດທິຜົນ;
5. ສ້າງແຜນການ-ແຜນງົບປະມານ ປະຈຳປີ ຂອງຂະແໜງການ ພ້ອມທັງສັງລວມ, ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດ ປະຈຳອາທິດ, ປະຈຳເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ ແລະ 01 ປີ ເພື່ອລາຍງານຕໍ່ກະຊວງກະສິກຳ ແລະ ປ່າໄມ້;
6. ເປັນເສນາທິການໃຫ້ກົມ ໃນການເກັບກຳ, ສັງລວມ, ວິເຄາະ, ວິໄຈ ແລະ ເຜີຍແຜ່ຂໍ້ມູນສະຖິຕິການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາຂອງຂະແໜງການ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ຂອງກົມລ້ຽງສັດ ແລະ ການປະມົງ ປະຈຳອາທິດ, ປະຈຳເດືອນ, 03 ເດືອນ, 06 ເດືອນ, 9 ເດືອນ, ປະຈຳປີ ແລະ 05 ປີ;
7. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

ມາດຕາ 9 ໜ້າທີ່ ຂອງພະແນກມາດຕະຖານ ແລະ ສຸຂານາໄມ

ພະແນກມາດຕະຖານ ແລະ ສຸຂານາໄມ ມີໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ກົມລ້ຽງສັດ ແລະ ການປະມົງ ໃນການຄົ້ນຄວ້າຜັນຂະຫຍາຍ ແນວທາງນະໂຍບາຍ, ແຜນຍຸດທະສາດ ຂອງຂະແໜງການ ໃຫ້ເປັນແຜນດຳເນີນງານ, ໂຄງການລະອຽດ ເພື່ອພັດທະນາລະບົບມາດຕະຖານ, ນິຕິກຳ ແລະ ມາດຕະການດ້ານສຸຂານາໄມ ກ່ຽວກັບການເຄື່ອນໄຫວວຽກງານພັດທະນາ ແລະ ຄຸ້ມຄອງ ການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ທັງພາກລັດ ແລະ ເອກະຊົນ ໃຫ້ຄົບຖ້ວນ, ຮັດກຸມ, ມີຄວາມສັກສິດ ແລະ ສອດຄ່ອງກັບສາກົນ;
2. ຄົ້ນຄວ້າ, ກຳນົດມາດຕະຖານການລ້ຽງສັດທີ່ດີ (GAHP), ກຳນົດມາດຕະຖານ ແລະ ພັດທະນາວຽກງານການກວດກາ, ຢັ້ງຢືນ, ຂຶ້ນທະບຽນ, ຮັບຮອງມາດຕະຖານຟາມລ້ຽງສັດ-ສັດນ້ຳ, ໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ໂຮງປຸງແຕ່ງຜະລິດຕະພັນສັດ ແລະ ສະຖານທີ່ເກັບຮັກສາຜະລິດຕະພັນສັດ-ສັດນ້ຳ, ໂຮງງານຢາສັດຕະວະແພດ, ການຂົນສົ່ງ ແລະ ຕະຫຼາດສິນຄ້າ ກ່ຽວກັບສັດ-ສັດນ້ຳ, ກົນຈັກ ແລະ ເຄື່ອງມືອຸປະກອນ ຮັບໃຊ້ການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ;
3. ຄົ້ນຄວ້າ, ກຳນົດລາຍການ ແລະ ບັນດາມາດຕະການສົ່ງເສີມການລ້ຽງສັດ-ສັດນ້ຳ ຮັບໃຊ້ພາຍໃນ, ທົດແທນການນຳເຂົ້າ ເພື່ອປົກປ້ອງຜູ້ຜະລິດພາຍໃນ ພ້ອມທັງວາງແຜນດຸ່ນດ່ຽງການຜະລິດພາຍໃນ ແລະ ການນຳເຂົ້າສິນຄ້າ ກ່ຽວກັບສັດ, ຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ; ຄົ້ນຄວ້າ, ສັງລວມມາດຕະຖານເງື່ອນໄຂ, ດ້ານເຕັກນິກ ແລະ ຄຸນນະພາບ ສິນຄ້າທີ່ມີສັນຍາ SPS ແລ້ວ, ສຶກສາ ແລະ ຄົ້ນຄວ້າ ວິທີການຂັ້ນຕອນ, ມາດຕະຖານ, ລະບຽບການ, ວິເຄາະວິໄຈຕະຫຼາດ ຂອງບັນດາປະເທດທີ່ມີຄວາມຕ້ອງການສິນຄ້າກະສິກຳ ຂອງ ສປປ ລາວ ເພື່ອກຳນົດຊະນິດສິນຄ້າ, ປະເພດສັດ ບໍລິມະສິດສົ່ງອອກ ຂອງປະເທດເຮົາທີ່ມີທ່າແຮງ, ມີສັນຍາຊື້ຂາຍແລ້ວ; ປະສານ ແລະ ເຈລະຈາ ເຕັກນິກເປີດຕະຫຼາດຢ່າງເປັນທາງການສຳລັບສົ່ງອອກສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ກັບປະເທດຄູ່ຄ້າ ຕາມມາດຕະຖານສາກົນ ທີ່ ສປປ ລາວ ເປັນພາຄີ;
4. ເປັນເຈົ້າການ ໃນການຄົ້ນຄວ້າ, ສຶກສາ ບັນດາສັນຍາ, ສົນທິສັນຍາ, ກົດບັດ, ຂໍ້ຕົກລົງ, ມາດຕະຖານ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບການລ້ຽງສັດ, ການສັດຕະວະແພດ ແລະ ປະມົງ ລວມທັງສຸຂານາໄມຂອງຜະລິດຕະພັນສັນຄ້າ ກ່ຽວກັບສັດ ແລະ ການປະມົງ ເພື່ອຜັນຂະຫຍາຍມາເປັນນິຕິກຳ, ລະບຽບການ ແລະ ມາດຕະການ ຂອງຂະແໜງການ;
5. ເປັນເຈົ້າການ ປະສານສົມທົບກັບ ພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງ, ປັບປຸງຮ່າງກົດໝາຍ, ນິຕິກຳ ແລະ ມາດຕະຖານຕ່າງໆ ໃຫ້ມີປະສິດທິຜົນ ແລະ ສອດຄ່ອງກັບນະໂຍບາຍ, ກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ສາກົນ;
6. ຄົ້ນຄວ້າ, ປັບປຸງບັນດາ ນິຕິກຳ, ກົນໄກ, ລະບຽບການ, ຂັ້ນຂອດ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກໃຫ້ແກ່ການດຶງດູດການລົງທຶນ, ເຄື່ອນໄຫວດຳເນີນທຸລະກິດ, ການຜະລິດ ຂອງບັນດາບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ຄອບຄົວຕົວແບບ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ; ຄົ້ນຄວ້າ ແລະ ປະກອບຄຳເຫັນ, ໃຫ້ການປຶກສາ, ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນພາຍໃນ ແລະ ຕ່າງປະເທດ ລວມທັງການສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ;
7. ໂຄສະນາ, ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳ, ນະໂຍບາຍ, ມາດຕະຖານ ແລະ ມາດຕະການດ້ານສຸຂານາໄມ ກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ;
8. ສ້າງຖານຂໍ້ມູນມາດຕະຖານ ແລະ ລະບຽບການ ກ່ຽວກັບການລ້ຽງສັດ, ສັດຕະວະແພດ, ການປະມົງ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການເຈລະຈາເປີດຕະຫຼາດກັບບັນດາປະເທດຄູ່ຄ້າ;

9. ເປັນເຈົ້າການປະສານງານດ້ານສຸຂານາໄມສັດ ໃຫ້ແກ່ຈຸດສອບຖາມດ້ານສຸຂານາໄມ ຂອງຂະແໜງກະສິກຳ ແລະ ປ່າໄມ້;
10. ສະກັດກັ້ນການກະທຳທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ ກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ພ້ອມທັງປະສານ ກ່ຽວກັບການປະກອບສຳນວນຄະດີ ແລະ ລາຍງານ ການກະທຳຄວາມຜິດ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກລ້ຽງສັດ**

ພະແນກລ້ຽງສັດ ມີໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະ ການປະມົງ ໃນການຮ່າງ, ສ້າງ, ປັບປຸງ, ໂຄສະນາ ແລະ ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ຂໍ້ຕົກລົງ, ແຈ້ງການ, ຄຳສັ່ງ, ຄຳແນະນຳ ແລະ ລະບຽບການ ກ່ຽວກັບວຽກງານລ້ຽງສັດ;
2. ເປັນເຈົ້າການໃນການຄຸ້ມຄອງ ແລະ ພັດທະນາ ການລ້ຽງສັດໃຫຍ່, ສັດນ້ອຍ ແລະ ສັດປີກ;
3. ເປັນເຈົ້າການຊຸກຍູ້ໃນການພັດທະນາທົ່ງຫຍ້າລ້ຽງສັດ, ສົ່ງເສີມການປູກ, ນຳໃຊ້ ພືດອາຫານສັດ ແລະ ແຫຼ່ງວັດຖຸດິບອາຫານສັດ;
4. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການສະເໜີໂຄງການລົງທຶນ ຫຼື ການດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ ແລະ ຮ່ວມກັບຄະນະກຳມະການໃນການກວດກາ, ຮັບຮອງ ມາດຕະຖານ ຟາມ, ການຂຶ້ນທະບຽນຟາມ, ການຢັ້ງຢືນກຳມະພັນສັດ ແລະ ພືດອາຫານສັດ;
5. ຍູ້ແຮງການລ້ຽງສັດເປັນສິນຄ້າແບບເປັນຟາມ ໃຫ້ເປັນການຜະລິດທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງ ຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງທີ່ໄດ້ປຽບ ຂອງທ້ອງຖິ່ນ; ຊຸກຍູ້ການພັດທະນາ ວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າ ສົດ, ຊີວະພາບ, ສະອາດ, ຜະລິດສິນຄ້າທີ່ເປັນທ່າແຮງໄດ້ປຽບ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມ ຂອງປະເທດຄູ່ຄ້າ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາ, ວິເຄາະ-ວິໄຈ, ສ້າງຖານຂໍ້ມູນສະຖິຕິສັດ ແລະ ເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບທີ່ດິນລ້ຽງສັດ, ຂໍ້ມູນການລ້ຽງສັດ ຢ່າງເປັນລະບົບ ໂດຍນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ໃຫ້ສາມາດເຊື່ອມໂຍງທັງພາຍໃນ ແລະ ສາກົນ;
7. ຊຸກຍູ້, ສະໜັບສະໜູນ ການພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ ແນວພັນສັດ ລວມທັງນ້ຳເຊື້ອ, ໄຂ່ອ່ອນ ຂອງສັດ, ການຜະລິດອາຫານສັດ ແລະ ການພັດທະນາ ກ່ຽວກັບທົ່ງຫຍ້າລ້ຽງສັດ;
8. ຄົ້ນຄວ້າ, ພິຈາລະນາສະເໜີ ຈົດລິຂະສິດ, ຂຶ້ນທະບຽນ, ແນວພັນສັດ, ພືດອາຫານສັດ ແລະ ອຸປະກອນລ້ຽງສັດ;
9. ຊຸກຍູ້, ຕິດຕາມ ການພັດທະນາກຸ່ມ, ສະມາຄົມ, ສະຫະກອນ ຜູ້ລ້ຽງສັດ ແລະ ການສ້າງກອງທຶນພັດທະນາການລ້ຽງສັດ;
10. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດວຽກງານໃນຂົງເຂດການລ້ຽງສັດ; ຊຸກຍູ້, ສະໜັບສະໜູນ ດ້ານເຕັກນິກ, ວິຊາການ ແລະ ອື່ນໆ ໃຫ້ແກ່ບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງ, ສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;

11. ຄຸ້ມຄອງ, ພັດທະນາວຽກງານຂຶ້ນທະບຽນພິມສັດ ແລະ ພັດທະນາລະບົບການກວດສອບຍ້ອນຫຼັງປະຫວັດຂອງສັດ ແລະ ຕະຫຼາດສັດມີຊີວິດ ໃນຂອບເຂດທົ່ວປະເທດ;
12. ຄົ້ນຄວ້າ ແລະ ປະກອບຄໍາເຫັນຮ່ວມກັບພະແນກສັດຕະວະແພດ ກ່ຽວກັບການນໍາເຂົ້າ-ສົ່ງອອກ ແລະ ສົ່ງຜ່ານ ສັດມີຊີວິດ, ແນວພັນສັດ ແລະ ອຸປະກອນການລ້ຽງສັດ;
13. ກວດກາ, ຕິດຕາມ ແລະ ສະກັດກັ້ນ ທຸກການກະທໍາທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບ ການລ້ຽງສັດ ພ້ອມທັງເປັນເຈົ້າການປະກອບສໍານວນຄະດີ ແລະ ລາຍງານການກະທໍາຄວາມຜິດ ຕໍ່ເຈົ້າໜ້າ ທີ່ທີ່ກ່ຽວຂ້ອງ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

### ມາດຕາ 11 ໜ້າທີ່ ຂອງພະແນກສັດຕະວະແພດ

ພະແນກສັດຕະວະແພດ ມີໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ກົມລ້ຽງສັດ ແລະ ການປະມົງ ໃນການຄຸ້ມຄອງ ແລະ ພັດທະນາ ການບໍລິການດ້ານສັດຕະວະແພດ;
2. ເປັນເຈົ້າການໃນການຮ່າງ, ສ້າງ, ປັບປຸງ, ໂຄສະນາ ແລະ ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ດໍາລັດ, ຂໍ້ຕົກລົງ, ແຈ້ງການ, ຄໍາສັ່ງ, ຄໍາແນະນໍາ ແລະ ລະບຽບການ ກ່ຽວກັບວຽກງານສັດຕະວະແພດ;
3. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານກັກກັນສັດ, ດ່ານກວດກາສັດຕະວະແພດ, ການຄວບຄຸມການເຄື່ອນຍ້າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ, ຜະລິດຕະພັນການສັດຕະວະແພດ, ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລວມທັງການຢັ້ງຢືນດ້ານສຸຂະພາບສັດ ແລະ ສຸຂານາໄມ;
4. ຄົ້ນຄວ້າ, ສະເໜີ ຈົດລິຂະສິດ, ຂຶ້ນທະບຽນ ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ, ສານເຄມີສໍາລັບຜະລິດຢາສັດຕະວະແພດ ແລະ ເຊື້ອພັນພະຍາດສັດ;
5. ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດລະບົບ ເຝົ້າລະວັງ, ກັນ ແລະ ຄວບຄຸມພະຍາດສັດ ລວມທັງການພັດທະນາລະບົບຄວາມປອດໄພ ທາງດ້ານຊີວະພາບ ຂອງການລ້ຽງສັດ;
6. ສ້າງ ແລະ ປັບປຸງຕາໜ່າງ, ຫຼັກສູດສັດຕະວະແພດ ແລະ ສັດຕະວະແພດບ້ານ; ຊຸກຍູ້, ສົ່ງເສີມ ການບໍລິການດ້ານການສັດຕະວະແພດ, ວິຊາຊີບສັດຕະວະແພດ, ສັດຕະວະແພດບ້ານ ແລະ ສະຫວັດດີການສັດ;
7. ກໍານົດບັນຊີລາຍຊື່ພະຍາດລະບາດ ຂອງສັດ-ສັດນໍ້າ, ຊະນິດສັດ-ສັດນໍ້າ, ລາຍການສານຊີວະພັນ-ເຄມີພັນ, ຢາສັດຕະວະແພດທີ່ມີຄວາມສ່ຽງ ເພື່ອຄວບຄຸມການແຜ່ລະບາດຂອງພະຍາດ, ປ້ອງກັນຊີວິດ, ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
8. ຍູ້ແຮງວຽກງານພັດທະນາດ່ານ ແລະ ກໍານົດດ່ານກວດກາສັດຕະວະແພດ ເພື່ອກວດກາການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ, ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ປະມົງ ພ້ອມທັງກໍານົດຈຸດກວດກາ ຂອງເຂດປອດພະຍາດສັດ ແລະ ຈຸດກວດກາຊົ່ວຄາວ ພາຍໃນປະເທດ ໃນກໍລະນີເກີດພະຍາດລະບາດ; ຄົ້ນຄວ້າ ແລະ ສະເໜີຕໍ່ກະຊວງກະສິກໍາ ແລະ ປ່າໄມ້ ກ່ຽວກັບການປະກາດ ແລະ ຍົກເລີກ ເຂດລະບາດພະຍາດສັດ;
9. ຄຸ້ມຄອງ, ຕິດຕາມ, ກວດກາດ້ານວິຊາການ, ບັນດາທຸລະກິດ ກ່ຽວກັບການສັດຕະວະແພດ, ການຂ້າສັດ, ການປຸງແຕ່ງ ແລະ ການກວດກາອະນາໄມຊີ້ນ;
10. ເປັນເຈົ້າການພັດທະນາ ວຽກງານລະບາດວິທະຍາສັດຕະວະແພດ, ວຽກງານເຝົ້າລະວັງ, ປະເມີນຄວາມສ່ຽງຂອງການແຜ່ລະບາດ ຂອງພະຍາດສັດ, ກັນ, ໂຕ້ຕອບ ແລະ ຄວບຄຸມພະຍາດລະບາດຂອງສັດ, ພະຍາດຕິດຕໍ່ຈາກສັດສູ່ຄົນ ແລະ ຄົນສູ່ສັດ;

11. ເປັນເຈົ້າການປະສານສົມທົບກັບ ພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ດໍາເນີນການຄຸ້ມຄອງໂຮງຂ້າສັດ ແລະ ສະຖານທີ່ປຸງແຕ່ງຜະລິດຕະພັນສັດ ລວມທັງສະຖານທີ່ວາງຂາຍຜະລິດຕະພັນສັດ ເພື່ອໃຫ້ຖືກຕ້ອງ, ສອດຄ່ອງກັບມາດຕະຖານດ້ານເຕັກນິກ ທີ່ກໍານົດໄວ້;
12. ຊຸກຍູ້ການສ້າງຕັ້ງ ສະພາສັດຕະວະແພດ, ສະມາຄົມສັດຕະວະແພດ ແລະ ກອງທຶນພັດທະນາດ້ານການຮັກສາສຸຂະພາບສັດ;
13. ພັດທະນາລະບົບການຄຸ້ມຄອງ, ກວດກາ, ຕິດຕາມ ຜູ້ປະກອບການ ກ່ຽວກັບທຸລະກິດການສັດຕະວະແພດ ລວມທັງໂຮງງານຜະລິດ, ຈໍາໜ່າຍຢາສັດຕະວະແພດ ແລະ ຜະລິດຕະພັນການສັດຕະວະແພດ;
14. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ກ່ຽວກັບການລົງທຶນ ຫຼື ການດໍາເນີນທຸລະກິດ ກ່ຽວກັບການສັດຕະວະແພດ ເພື່ອນໍາສະເໜີການນໍາກົມ ພິຈາລະນາອອກໃບອະນຸຍາດສ້າງຕັ້ງ ຄຣີນິກ, ໂຮງໝໍປົວສັດ, ໃບຢັ້ງຢືນສຸຂະພາບສັດ, ຮ້ານຈໍາໜ່າຍຢາສັດຕະວະແພດ ແລະ ອຸປະກອນສັດຕະວະແພດ;
15. ເປັນເຈົ້າການຄົ້ນຄ້ວາ ແລະ ປະກອບຄໍາເຫັນຮ່ວມກັບພະແນກລ້ຽງສັດ ກ່ຽວກັບການນໍາເຂົ້າ-ສົ່ງອອກ ແລະ ສົ່ງຜ່ານ ສັດມີຊີວິດ ແລະ ແນວພັນສັດ;
16. ກວດກາ, ຕິດຕາມ ແລະ ສະກັດກັ້ນ ທຸກການກະທໍາ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສັດຕະວະແພດ ພ້ອມທັງເປັນເຈົ້າການປະກອບສໍານວນຄະດີ ແລະ ລາຍງານການກະທໍາຄວາມຜິດ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
17. ຄົ້ນຄວ້າ ອອກ ຫຼື ໂຈະ ໃບອະນຸຍາດການດໍາເນີນທຸລະກິດ ກ່ຽວກັບໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ, ສະຖານທີ່ເກັບຮັກສາ ແລະ ບ່ອນວາງຂາຍຜະລິດຕະພັນສັດ;
18. ພັດທະນາເຕັກນິກການວິໄຈຜະລິດຕະພັນສັດ ໃຫ້ໄດ້ຕາມມາດຕະຖານ ຂອງຂົງເຂດ ແລະ ສາກົນ;
19. ເປັນເຈົ້າການພັດທະນາລະບົບຖານຂໍ້ມູນ, ເກັບກໍາ ແລະ ວິເຄາະຂໍ້ມູນສະຖິຕິ ກ່ຽວກັບຜະລິດຕະພັນສັດ, ຢາສານຕົກຄ້າງ, ໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ, ສະຖານທີ່ເກັບຮັກສາ ແລະ ບ່ອນວາງຂາຍຜະລິດຕະພັນສັດ;
20. ສະກັດກັ້ນການກະທໍາທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຄຸນນະພາບ ຂອງຜະລິດຕະພັນສັດ ພ້ອມທັງໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນການກະທໍາຄວາມຜິດ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
21. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອໍານວຍຄວາມສະດວກ ໃຫ້ແກ່ການປະຕິບັດວຽກງານ ໃນຂົງເຂດການສັດຕະວະແພດ; ຊຸກຍູ້, ສະໜັບສະໜູນ ດ້ານເຕັກນິກ, ວິຊາການ ແລະ ອື່ນໆ ໃຫ້ແກ່ບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງ, ສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;
22. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງພະແນກປະມົງ**

ພະແນກປະມົງ ມີໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະ ການປະມົງ ໃນການຮ່າງ, ສ້າງ, ປັບປຸງ, ໂຄສະນາ ແລະ ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ, ດໍາລັດ, ຂໍ້ຕົກລົງ, ແຈ້ງການ, ຄໍາສັ່ງ, ຄໍາແນະນໍາ ແລະ ລະບຽບການ ກ່ຽວກັບວຽກງານປະມົງ;
2. ສໍາຫຼວດດ້ານນິເວດວິທະຍາ ແລະ ຊີວະວິທະຍາ ຂອງສັດນໍ້າ ເພື່ອວາງແຜນໃນການຄຸ້ມຄອງການປະມົງ;
3. ເປັນເຈົ້າການຄຸ້ມຄອງ ການຫາ, ການຊົມໃຊ້ສັດນໍ້າ, ການປົກຮັກສາຊັບພະຍາກອນປະມົງແບບຍືນຍົງ ລວມທັງການຄຸ້ມຄອງການປະມົງໃນອ່າງເກັບນໍ້າ ແລະ ການພັດທະນາການລ້ຽງສັດນໍ້າ;

4. ເປັນເຈົ້າການ ປະສານສົມທົບກັບ ພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ດຳເນີນການຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດນໍ້າ ລວມທັງສະຖານທີ່ວາງຂາຍຜະລິດຕະພັນສັດນໍ້າ ເພື່ອໃຫ້ສອດຄ່ອງກັບມາດຕະຖານດ້ານເຕັກນິກທີ່ກຳນົດ;
5. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການສະເໜີໂຄງການລົງທຶນ ຫຼື ການດຳເນີນທຸລະກິດ ກ່ຽວກັບການປະມົງ, ບົດປະເມີນຜົນສິ່ງແວດລ້ອມ ຂອງໂຄງການພັດທະນາທີ່ມີຜົນກະທົບຕໍ່ຊັບພະຍາກອນປະມົງ, ການກວດກາ-ຮັບຮອງ ມາດຕະຖານ ແລະ ການຂຶ້ນທະບຽນຟາມລ້ຽງສັດນໍ້າ;
6. ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ປາ ແລະ ສັດນໍ້າມີຊີວິດ ລວມທັງແນວພັນ ແລະ ອຸປະກອນດ້ານການປະມົງ;
7. ຍູ້ແຮງການປະມົງເປັນສິນຄ້າແບບເປັນຟາມ ໃຫ້ເປັນການຜະລິດທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງທີ່ໄດ້ປຽບຂອງທ້ອງຖິ່ນ; ຊຸກຍູ້ການພັດທະນາ ວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ, ຜະລິດສິນຄ້າທີ່ເປັນທ່າແຮງໄດ້ປຽບ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມຂອງປະເທດຄູ່ຄ້າ;
8. ຄົ້ນຄວ້າ, ກຳນົດ ລາຍການ ແລະ ບັນດາມາດຕະການ ສົ່ງເສີມການລ້ຽງສັດນໍ້າ ຮັບໃຊ້ພາຍໃນທົດແທນການນຳເຂົ້າ ເພື່ອປົກປ້ອງຜູ້ຜະລິດພາຍໃນ ພ້ອມທັງວາງແຜນດຸ່ນດ່ຽງການຜະລິດພາຍໃນ ແລະ ການນຳເຂົ້າຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ; ຄົ້ນຄວ້າ, ສັງລວມ ມາດຕະຖານ, ເງື່ອນໄຂ, ດ້ານເຕັກນິກ ແລະ ຄຸນນະພາບ ສິນຄ້າທີ່ມີສັນຍາ SPS ແລ້ວ; ສຶກສາ ແລະ ຄົ້ນຄວ້າ ວິທີການ, ຂັ້ນຕອນ, ມາດຕະຖານ ລະບຽບການ, ວິເຄາະ, ວິໄຈ ຕະຫຼາດ ຂອງບັນດາປະເທດທີ່ມີຄວາມຕ້ອງການ ເພື່ອກຳນົດຊະນິດສິນຄ້າບຸລິມະສິດສົ່ງອອກ ຂອງປະເທດເຮົາທີ່ມີທ່າແຮງ; ປະສານ ແລະ ເຈລະຈາ ເຕັກນິກເປີດຕະຫຼາດ ຢ່າງເປັນທາງການສຳລັບສົ່ງອອກສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ກັບປະເທດຄູ່ຄ້າ;
9. ພັດທະນາ, ວິເຄາະ-ວິໄຈ, ສ້າງຖານຂໍ້ມູນ ດ້ານການປະມົງ ແລະ ແຫຼ່ງທີ່ຢູ່ອາໄສ ຂອງສັດນໍ້າ ຢ່າງເປັນລະບົບ ດ້ວຍການນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ໃຫ້ສາມາດເຊື່ອມໂຍງ ພາຍໃນ ແລະ ສາກົນ;
10. ຊຸກຍູ້, ສະໜັບສະໜູນ ການພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ ແນວພັນສັດນໍ້າ, ການຜະລິດອາຫານປາ ແລະ ອາຫານສັດນໍ້າ;
11. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດວຽກງານ ໃນຂົງເຂດການປະມົງ; ຊຸກຍູ້, ສະໜັບສະໜູນ ດ້ານເຕັກນິກ ແລະ ວິຊາການ ແລະ ອື່ນໆ ໃຫ້ແກ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;
12. ຊຸກຍູ້ການສ້າງ ແລະ ການຄຸ້ມຄອງ ກຸ່ມ, ສະມາຄົມ, ສະຫະກອນ ກ່ຽວກັບວິຊາຊີບການປະມົງ ລວມທັງການສ້າງກອງທຶນພັດທະນາດ້ານການລ້ຽງ ແລະ ການຮັກສາສຸຂະພາບສັດນໍ້າ;
13. ກວດກາ, ຕິດຕາມ ແລະ ສະກັດກັ້ນ ທຸກການກະທຳ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການປະມົງ ພ້ອມທັງເປັນເຈົ້າການປະກອບສຳນວນຄະດີ ແລະ ລາຍງານການກະທຳຄວາມຜິດ ຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
14. ຄົ້ນຄວ້າ ອອກ ຫຼື ໂຈະ ການອະນຸຍາດການດຳເນີນທຸລະກິດ ກ່ຽວກັບໂຮງງານປຸງແຕ່ງຜະລິດຕະພັນສັດນໍ້າ ສະຖານທີ່ເກັບຮັກສາ ແລະ ບ່ອນວາງຂາຍຜະລິດຕະພັນສັດນໍ້າ;
15. ພັດທະນາເຕັກນິກການວິໄຈຜະລິດຕະພັນສັດນໍ້າ ໃຫ້ໄດ້ຕາມມາດຕະຖານຂອງຂົງເຂດ ແລະ ສາກົນ;
16. ເປັນເຈົ້າການພັດທະນາລະບົບຖານຂໍ້ມູນ, ເກັບກຳ ແລະ ວິເຄາະ ຂໍ້ມູນສະຖິຕິ ກ່ຽວກັບຜະລິດຕະພັນສັດນໍ້າ ຢາ, ສານຕົກຄ້າງ, ໂຮງງານປຸງແຕ່ງຜະລິດຕະພັນສັດນໍ້າ, ສະຖານທີ່ເກັບຮັກສາ ແລະ ບ່ອນວາງຂາຍຜະລິດຕະພັນສັດນໍ້າ;

17. ສະກັດກັ້ນ ການກະທຳທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຄຸນນະພາບ ຂອງຜະລິດຕະພັນສັດນ້ຳ ພ້ອມທັງໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ ການກະທຳຄວາມຜິດ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
18. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງສູນວິໄຈພະຍາດສັດ**

ສູນວິໄຈພະຍາດສັດ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການພັດທະນາຫ້ອງວິໄຈພະຍາດສັດ ແລະ ຜະລິດຕະພັນສັດ ຂັ້ນສູນກາງ ແລະ ລະດັບພາກ ໃຫ້ກ້າວໜ້າທັນສະໄໝ; ສ້າງ ແລະ ປັບປຸງພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈ;
2. ພັດທະນາລະບົບການວິໄຈ ປິ່ນປົວພະຍາດສັດ, ສັດນ້ຳ ແລະ ສັດປ່າ; ດຳເນີນການວິໄຈ ຊອກຫາເຊື້ອພະຍາດຕິດແປດລະຫວ່າງສັດສູ່ສັດ ແລະ ຈາກສັດສູ່ຄົນ, ເຊື້ອ ທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ; ລວມທັງການວິໄຈພູມຕ້ານທານຕໍ່ພະຍາດ;
3. ສ້າງມາດຕະຖານເຕັກນິກ, ຄູ່ມື, ຄຳແນະນຳ ກ່ຽວກັບການວິໄຈພະຍາດສັດ ໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ;
4. ຕິດຕາມ, ກວດກາ ມາດຕະຖານການວິໄຈພະຍາດສັດ ຂອງພາກລັດ ແລະ ເອກະຊົນ ໃຫ້ມີຄຸນນະພາບ;
5. ສ້າງ ແລະ ຂະຫຍາຍຕາໜ່າງຫ້ອງວິໄຈພະຍາດສັດຢູ່ຂັ້ນທ້ອງຖິ່ນ ເພື່ອເປັນເສນາທິການໃຫ້ແກ່ສູນວິໄຈພະຍາດສັດໃນການວິໄຈພະຍາດ, ການເກັບ, ຮັກສາ ແລະ ນຳສົ່ງຕົວຢ່າງ;
6. ພັດທະນາລະບົບການເກັບກຳ ແລະ ສັງລວມຂໍ້ມູນຂ່າວສານ ກ່ຽວກັບການວິໄຈພະຍາດສັດ ໃຫ້ຖືກຕ້ອງ ວ່ອງໄວ ແລະ ທັນສະໄໝ; ລວມທັງເກັບຮັກສາເຊື້ອພະຍາດສັດ ເພື່ອການຄົ້ນຄວ້າວິໄຈ ແລະ ພັດທະນາການປິ່ນປົວພະຍາດ ລວມທັງການຜະລິດຢາ ແລະ ສານຊີວະພັນ;
7. ປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານຜົນການວິໄຈ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນຂໍ້ມູນພັດທະນາວຽກງານວິໄຈພະຍາດສັດ ແລະ ການເຝົ້າລະວັງ, ຄວບຄຸມພະຍາດສັດ, ພະຍາດຕິດຕໍ່ຈາກສັດສູ່ຄົນ ແລະ ເຊື້ອພະຍາດທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ ໃຫ້ມີປະສິດທິພາບ;
8. ພົວພັນຮ່ວມມືກັບຫ້ອງວິໄຈອ້າງອີງຂອງຂົງເຂດ ແລະ ສາກົນ ໃນການປິ່ນປົວ ແລະ ຄົ້ນຄວ້າວິໄຈພະຍາດສັດ, ສັດນ້ຳ ແລະ ສັດປ່າ;
9. ດຳເນີນການວິໄຈຄຸນນະພາບ ຂອງຜະລິດຕະພັນສັດ ແລະ ສັດນ້ຳ (ຊີ້ນ, ປາ, ນົມ, ໄຂ່ ແລະ ອື່ນໆ) ດ້ານວັດຖຸ, ຈຸລິນຊີວິທະຍາ ແລະ ສານເຄມີຕົກຄ້າງ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງສູນຜະລິດຢາສັດຕະວະແພດ**

ສູນຜະລິດຢາສັດຕະວະແພດ ມີໜ້າທີ່ ດັ່ງນີ້:

1. ພັດທະນາເຕັກນິກການຜະລິດ, ກວດກາຄຸນນະພາບ, ການສະໜອງ ແລະ ຂະຫຍາຍຕາໜ່າງການນຳໃຊ້ຢາສັດຕະວະແພດ ພ້ອມທັງການສະໜອງອຸປະກອນການສັດຕະວະແພດ;
2. ຄົ້ນຄວ້າ, ວິໄຈ ເຊື້ອພັນຢາກັນພະຍາດສັດ ແນໃສ່ນຳໃຊ້ຜະລິດຢາທີ່ມີຄຸນນະພາບ ເພື່ອກັນພະຍາດສັດຊະນິດຕ່າງໆ ໃຫ້ພຽງພໍກັບຄວາມຕ້ອງການ ຂອງຊາວກະສິກອນຜູ້ລ້ຽງສັດພາຍໃນປະເທດ;
3. ຜະລິດ ແລະ ສະໜອງ ຢາກັນພະຍາດ, ຢາ ແລະ ອຸປະກອນ ດ້ານສັດຕະວະແພດໃຫ້ແກ່ຜູ້ລ້ຽງສັດ ໃນຂອບເຂດທົ່ວປະເທດ;

4. ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການຜະລິດ, ກວດກາ, ທົດລອງ ແລະ ຢັ້ງຢືນ ຄຸນນະພາບຢາສັດຕະວະແພດ;
5. ຄົ້ນຄວ້າ, ຂຶ້ນທະບຽນ ຢາສັດຕະວະແພດ, ສານເຄມີສຳລັບຜະລິດຢາສັດຕະວະແພດ ແລະ ເຊື້ອພັນຢາກັນພະຍາດສັດ;
6. ພັດທະນາການລ້ຽງສັດທົດລອງ ເພື່ອນຳໃຊ້ເຂົ້າໃນການຜະລິດ ແລະ ກວດກາຄຸນນະພາບຢາກັນພະຍາດສັດ ແລະ ຜະລິດຕະພັນຢາ ຂອງພາກສ່ວນອື່ນ;
7. ເປັນເຈົ້າການ ໃນການຄຸ້ມຄອງ, ຄົ້ນຄວ້າ ການລົງທຶນ, ການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈຳໜ່າຍຢາກັນພະຍາດສັດ;
8. ສ້າງຄູ່ມື, ສື່ໂຄສະນາ ເຜີຍແຜ່ໃຫ້ຜູ້ລ້ຽງສັດຮັບຮູ້ ກ່ຽວກັບຄວາມສຳຄັນ ແລະ ການນຳໃຊ້ຢາສັດຕະວະແພດ;
9. ພັດທະນາບຸກຄະລາກອນ, ວັດຖຸ, ເຕັກນິກ ກ່ຽວກັບການຄົ້ນຄວ້າວິໄຈ, ການຜະລິດ, ການກວດກາຄຸນນະພາບຢາສັດຕະວະແພດ ໃຫ້ທັນສະໄໝ;
10. ຄຸ້ມຄອງ, ປັບປຸງ ແລະ ສ້ອມແປງ ພາຫະນະ, ເຄື່ອງຈັກ, ເຄື່ອງມືຮັບໃຊ້ການຜະລິດ ໃຫ້ສາມາດນຳໃຊ້ຢ່າງມີປະໂຫຍດສູງສຸດ;
11. ເກັບກຳ ແລະ ສັງລວມ ຂໍ້ມູນຂ່າວສານ ກ່ຽວກັບການນຳໃຊ້ຢາ ແລະ ອຸປະກອນສັດຕະວະແພດ ຂອງຜູ້ລ້ຽງສັດໃນຂອບເຂດທົ່ວປະເທດ;
12. ແລກປ່ຽນບົດຮຽນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງຕ່າງໆ ໃນການພັດທະນາການຜະລິດ ແລະ ຄວບຄຸມຄຸນນະພາບຢາສັດຕະວະແພດ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງສູນວິໄຈອາຫານສັດ**

ສູນວິໄຈອາຫານສັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈອາຫານສັດ, ທົດລອງ, ຢັ້ງຢືນ ຄຸນນະພາບອາຫານສັດ-ສັດນ້ຳ ເພື່ອຮັບໃຊ້ໃຫ້ແກ່ການຜະລິດຢູ່ພາຍໃນ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ;
2. ຄຸ້ມຄອງ ການຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ອາຫານສັດ, ພືດອາຫານສັດ ແລະ ວັດຖຸດິບອາຫານສັດ ລວມທັງການຄຸ້ມຄອງໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ຜະລິດຕະພັນອາຫານສັດ ແລະ ຮ້ານຈຳໜ່າຍອາຫານສັດ;
3. ເປັນເຈົ້າການ ຄຸ້ມຄອງ, ພັດທະນາການວິໄຈຄຸນນະພາບອາຫານສັດ-ສັດນ້ຳ ໃຫ້ທັນສະໄໝ ໄດ້ມາດຕະຖານ;
4. ກວດກາ, ວິໄຈ ແລະ ຢັ້ງຢືນ ຄຸນນະພາບ ແລະ ຄວາມປອດໄພ ຂອງອາຫານສັດສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ລວມທັງພືດອາຫານສັດ, ວັດຖຸດິບ ແລະ ສານປຸງແຕ່ງອາຫານສັດ;
5. ຄົ້ນຄວ້າ, ວິໄຈ ແລະ ຢັ້ງຢືນ ຄຸນນະພາບອາຫານສັດ ເພື່ອຂຶ້ນທະບຽນອາຫານສັດ ໃຫ້ແກ່ໂຮງງານອາຫານສັດ, ໂຮງປະສົມອາຫານສັດ, ຜະລິດຕະພັນອາຫານສັດ ແລະ ຮ້ານຈຳໜ່າຍອາຫານສັດ;
6. ສ້າງຄວາມເຂັ້ມແຂງທາງດ້ານເຕັກນິກ-ເຕັກໂນໂລຊີ ແລະ ບຸກຄະລາກອນ ກ່ຽວກັບການຜະລິດອາຫານສັດ ແລະ ການວິໄຈອາຫານສັດ;
7. ສະຫຼຸບ, ລາຍງານ ປະເມີນຜົນຄວາມຕ້ອງການອາຫານສັດ ແລະ ການສະໜອງອາຫານສັດສຳລັບການລ້ຽງສັດ;
8. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ ຂອງສູນພັດທະນາການປະມົງ**

ສູນພັດທະນາການປະມົງ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການໃນການພັດທະນາ ແລະ ສ້າງມາດຕະຖານເຕັກນິກ ກ່ຽວກັບການຜະລິດແນວພັນ, ປັບປຸງພັນການລ້ຽງ ແລະ ການປຸງແຕ່ງຜະລິດຕະພັນ ລວມທັງມາດຕະຖານຟາມສັດນໍ້າ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນໍາໃຊ້ເຂົ້າໃນການພັດທະນາການປະມົງ;
3. ພັດທະນາເຕັກນິກການຮັກສາສຸຂະພາບສັດນໍ້າ, ການວິໄຈພະຍາດສັດນໍ້າ ລວມທັງການກວດກາຄຸນນະພາບນໍ້າສໍາລັບການປະມົງ;
4. ພັດທະນາ ແລະ ກໍານົດເຕັກນິກການຫາ, ເຄື່ອງມືຫາປາ ແລະ ສັດນໍ້າ ທີ່ເໝາະສົມ;
5. ຝຶກອົບຮົມທາງດ້ານເຕັກນິກ-ເຕັກໂນໂລຊີ ກ່ຽວກັບການຜະລິດແນວພັນ, ການລ້ຽງ, ການຮັກສາສຸຂະພາບ ແລະ ການປຸງແຕ່ງປາ ແລະ ສັດນໍ້າ;
6. ຜະລິດ, ສະໜອງລູກປາ ແລະ ສັດນໍ້າ ເພື່ອຮັບໃຊ້ໃຫ້ແກ່ການສົ່ງເສີມການລ້ຽງປາ ແລະ ສາທິດເຕັກນິກກ່ຽວກັບການລ້ຽງ, ເກັບກູ້ ແລະ ປຸງແຕ່ງຜະລິດຕະພັນສັດນໍ້າ;
7. ສ້າງຄູ່ມື, ສື່ໂຄສະນາ ແລະ ເຜີຍແຜ່ເຕັກນິກ ກ່ຽວກັບການລ້ຽງປາ ແລະ ສັດນໍ້າ;
8. ເກັບກໍາ ແລະ ສ້າງຖານຂໍ້ມູນຂ່າວສານ ກ່ຽວກັບການວິໄຈຄຸນນະພາບນໍ້າ ແລະ ພະຍາດປາ-ສັດນໍ້າ ໃນຂອບເຂດທົ່ວປະເທດ;
9. ປະສານງານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພັດທະນາການລ້ຽງປາ ແລະ ສັດນໍ້າ ທັງພາຍໃນ ແລະ ຕ່າງປະເທດ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 17 ຫຼັກການ**

ກົມລ້ຽງສັດ ແລະ ການປະມົງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ຂອງກົມລ້ຽງສັດ ແລະ ການປະມົງ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງພັກ-ລັດ; ນໍາເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນໍາເອົາແຜນການປະຈໍາປີ, ແຜນ 05 ປີ ຂອງກະຊວງກະສິກໍາ ແລະ ປ່າໄມ້ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 18 ແບບແຜນວິທີເຮັດວຽກ**

ກົມລ້ຽງສັດ ແລະ ການປະມົງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;

3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ ໃນແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກ ຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມ ຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19 ງົບປະມານ ແລະ ຕາປະທັບ**

ກົມລ້ຽງສັດ ແລະ ການປະມົງ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ກົມລ້ຽງສັດ ແລະ ການປະມົງ, ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0175/ກປ, ລົງວັນທີ 25 ມັງກອນ 2022.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ★ ລັດຖະມົນຕີ ★

**ປອ. ລິນຄຳ ດວງສະຫວັນ**